ດອກເກດ
DokkeD

# ຄວາມສຸກ ຂອງກະທິ

ງາມພັນ ເວດຊະຊີວະ ຂຽນ

ອຸດົມພອນ ບຸນຍາວົງ ແປ




ວັນນະກຳ ສຳລັບເຍົາວະຊົນ
ລາງວັນຊີໄຣ ປະເທດໄທ
ປະຈຳປີ 2006

# ຄວາມສຸກ

## ຂອງກະທິ

ຂອງຂວັນຈາກ
ດອກເດດ

ຄວາມສຸກ ຂອງກະທິ
ຂຽນໂດຍ ງາມພັນ ເວດຊາຊີວະ
ວັນນະກໍາໄທ ຣາງວັນຊີໄຣ ປະຈໍາປີ 2006

ແປໂດຍ ອຸດົມພອນ ບຸນຍາວົງ
ບັນນາທິການ ບໍລິສັດ ດອກເກດ ຈັດພິມຈໍາກັດ
ຮູບປະກອບໂດຍ ຈັນທິມາ ກັດຕິຍະສັກ (ປູ່ເປ້)
ອອກແບບ ຈັດພິມ ແລະຈໍາໜ່າຍ ໂດຍ
ບໍລິສັດ ດອກເກດຈັດພິມ ຈໍາກັດຜູ້ດຽວ
ທະບຽນອະນຸຍາດເລກທີ: 68/ພຈ 01042008
ພິມທີ່: ໂຮງພິມ ມັນທາຕຸລາດ
ຈໍານວນພິມ: 2000 ຫົວ
ວຽງຈັນ ມີນາ 2008
ໄດ້ຮັບອະນຸຍາດການແປ ແລະຈັດພິມ ຈາກຜູ້ຂຽນ ຜ່ານບໍລິສັດ *Piggy Bank Press*.
© ສະຫງວນລິຂະສິດ ພາສາລາວ ບໍລິສັດ ດອກເກດຈັດພິມ ຈໍາກັດຜູ້ດຽວ
ສະຫງວນລິຂະສິດ ຮູບປົກແລະຮູບປະກອບ ບໍລິສັດ ດອກເກດຈັດພິມ ຈໍາກັດ ຜູ້ດຽວ.

ລາຄາຂາຍ 28.000 ກີບ/ຫົວ

# ຄວາມສຸກ ຂອງກະທິ

ຂຽນໂດຍ ງາມພັນ ເວດຊາຊີວະ

ແປໂດຍ ອຸດົມພອນ ບຸນຍາວົງ

ດອກເກດ
DokkeD

## ຄຳນຳຜູ້ຈັດພິມ

ການໄດ້ອ່ານນະວະນິຍາຍດີໆຕື່ມຈັກເລື່ອງກໍເທົ່າກັບວ່າ ເຮົາໄດ້ເດີນທາງໄປທ່ຽວໃນໂລກອັກສອນ ອາລົມລ່ອງລອຍໄປຕາມຄາລົມຄົມມ່ວນ ເຊິ່ງຜູ້ຂຽນໄດ້ບັນຈົງສ້າງສັນຂຶ້ນດ້ວຍຈິນຕະນາການອັນລ້ຳເລີກ

" ຄວາມສຸກຂອງກະທິ " ເປັນນະວະນິຍາຍຂະໜາດສັ້ນ ຂອງ ງາມພັນ ເວດຊາຊີວະ ທີ່ໄດ້ຮັບຣາງວັນ " ວັນນະກຳສ້າງສັນຍອດຍ້ຽມຂອງ ອາຊຽນ" ຫຼື *S.E.A Write Award* ປະຈຳປີ 2006 ຂອງປະເທດໄທ ແລະກ່ອນໜ້ານີ້ກໍມີສຳນັກພິມຕ່າງປະເທດຫຼາຍບ່ອນ ນຳໄປແປ ເຊັ່ນ ອັງກິດ ຝຣັ່ງ ຍີ່ປຸ່ນ ເຢຍລະມັນ.

ເຖິງວ່າພາສາລາວ ກັບພາສາໄທ ມີຄວາມຄ້າຍຄືກັນຫຼາຍ ທັງຮາກເຫງົ້າຂອງຄຳສັບ ທາງປັດຊະຍາ ການເມືອງ ວິທະຍາສາດ ກໍແມ່ນອັນດຽວກັນ ຄື ປາລີ ແລະສັນສະກຣິດ ແຕ່ລັກສະນະການແປງຄຳ ແລະສຳນວນໂວຫານສະເພາະ ຂອງພາສາລາວກໍມີຕ່າງຫາກ ດັ່ງນັ້ນ ພວກເຮົາຈຶ່ງເຫັນວ່າ ມີຄວາມຈຳເປັນບໍ່ໜ້ອຍທີ່ຈະແປອອກໃຫ້ເປັນພາສາລາວອ້ອຍຕ້ອຍ ເຊິ່ງກໍເປັນຄວາມທ້າທາຍສີມືບໍ່ໜ້ອຍ ໂດຍສະເພາະສຳລັບນັກແປໃໝ່ຄື ອຸດົມພອນ ບຸນຍາວົງ ທີ່ຕ້ອງໄດ້ຄຶດຄົ້ນຫາສັບສຳນວນລາວທີ່ອາດຖືກຫຼົງລືມໄປແລ້ວ ແລະບາງເທື່ອ ມີຫຼາຍຄຳທີ່ເຂົ້າໃຈວ່າແມ່ນຄຳພາສາໄທ ແຕ່ເມື່ອຄົ້ນເລີກລົງໄປຈຶ່ງເຫັນວ່າແມ່ນຄຳລາວ ຈຶ່ງເອົາຄືນມາໃຊ້ ທັງນີ້ດ້ານໜຶ່ງ ກໍຢັ້ງຢືນວ່າຄຳສັບໃນພາສາລາວມີພຽງພໍໃຊ້ ແລະ

ມີອັນແຕກຕ່າງກັບຄຳໃນພາສາໄທ

"ຄວາມສຸກຂອງກະທິ" ມີຮູບແບບການປະພັນທີ່ຕ່າງອອກຈາກເລື່ອງຍາວທົ່ວໄປແດ່ ຕົວລະຄອນເອກເປັນນາງນ້ອຍອາຍຸ 8-9 ປີ ຢູ່ກັບພໍ່ຕູ້ແມ່ຕູ້ ໃນເຂດຊົນນະບົດນອກເມືອງ ເປັນຄອບຄົວຜູ້ມີການສຶກສາ ແລະຖານະດີ ແຕ່ກະທິ ກໍມີເລື່ອງອຸກອັ່ງຄັບໃຈ ຄື "ຄຶດຮອດແມ່". "ແມ່ໄປໃສ ? ເປັນຫຍັງ ຈຶ່ງບໍ່ຢາມລູກແດ່... ?" ວິທີການດຳເນີນເລື່ອງ ເລົ່າຜ່ານຄວາມຄຶດການບອກເລົ່າຂອງໂຕລະຄອນເອກ ໃນທຳນອງລີລາຄ່ອງລ່ຽນອ່ອນຊ້ອຍເກືອບເປັນບົດກະວີ ຈຶ່ງຈູງຜູ້ອ່ານໃຫ້ເພີດເພີນຍ່າງເຂົ້າໃນສວນອັກສອນນ້ອຍແຫ່ງນີ້ ຊື່ນຊົມດອກໄມ້ສີອ່ອນນວນເຢັນຕາ ແລະຄວາມຊຸ່ມເຢັນຂອງບັນຍາກາດ ຂອງເຄຫາສະຖານໃນສວນແຄມນໍ້າຢູ່ພາກກາງຂອງປະເທດໄທ.

ສຳນັກພິມດອກເກດ ຮູ້ສຶກພາກພູມໃຈແລະດີໃຈທີ່ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກຜູ້ຂຽນ ໃຫ້ເປັນຜູ້ຈັດພິມຈຳໜ່າຍ ຢູ່ໃນ ສ.ປ.ປ. ລາວ ທັງນີ້ໂດຍເຊື່ອວ່າ ການອ່ານວັນນະຄະດີ ບໍ່ວ່າຂອງຊາດໃດປະເທດໃດ ກໍມີສ່ວນສຳຄັນໃນການປູພື້ນຖານຄວາມຮູ້ສຶກທີ່ດີ ຄວາມເຂົ້າໃຈຕໍ່ສິລະປະວັດທະນະທຳ ແນວຄຶດຈິດໃຈ ຂອງຜູ້ຄົນໃນປະເທດນັ້ນໆ.

ຂໍຂອບໃຈຜູ້ຂຽນ ທີ່ໃຫ້ອະນຸຍາດ ທັງບໍລິຈາກຄ່າລິຂະສິດປຶ້ມ " ຄວາມສຸກຂອງກະທິ " ພາສາລາວ ຈຳນວນໜຶ່ງ ເພື່ອແຈກຢາຍລ້າໃຫ້ເດັກນ້ອຍລາວ.

ຂໍຂອບໃຈ ພຣູເດັນຊ໌ ບອກວິກ (Prudence Borthwick) ອະດີດພະນັກງານຂັ້ນນຳ ຂອງອຸຍນິເຊຟ (UNICEF) ປະຈຳ ສ.ປ.ປ. ລາວ ສົກປີ 2005 -07 ທີ່ເປັນເພື່ອນມິດທີ່ຮັກແພງ ຂອງທັງຜູ້ຂຽນແລະດອກເກດ ທີ່ອຸປະຖຳການຈັດພິມໃນຄັ້ງນີ້

ວຽງຈັນ ກຸມພາ 2008

ກອງບັນນາທິການ ດອກເກດ

# ເຮືອນແຄມຮ່ອງ

# ໑

# ໝໍ້ກະທະກັບຕະຫລິວ



*"ແມ່ບໍ່ເຄີຍສັນຍາວ່າຈະກັບຄືນມາ"*

ສຽງຂອງໝໍ້ກະທະກັບຕະຫລິວປຸກກະທິໃຫ້ຕື່ນຄືມື້ຜ່ານໆມາ ແທ້ແລ້ວກິ່ນຫອມຂອງເຂົ້າທີ່ຫາກໍຫຸງສຸກ ກໍມີສ່ວນ ຮວມທັງກິ່ນຄວັນຈາກເຕົາ ແລະກິ່ນຈືນໄຂ່ນຳ ແຕ່ສຽງຕະຫລິວເຄາະໝໍ້ກະທະຫັ້ນແລ້ວ ທີ່ດຶງກະທິຈາກການຫລັບໃຫລ ແລະຄວາມຝັນ ສູ່ມື້ໃໝ່.

ກະທິບໍ່ເຄີຍເສຽເວລານຳການແຕ່ງໂຕ ພໍ່ຕູ້ມັກເວົ້າຢອກເລີຍໆວ່າແລ່ນຜ່ານ້ຳມາແລ້ວບໍ ແມ່ຕູ້ຫັນມາເບິ່ງ ເວລາກະທິເຂົ້າມາໃນເຮືອນຄົວ ແມ່ຕູ້ບໍ່ເຄີຍຍິ້ມຕອບຫລືຖາມໄຖ່ ພໍ່ຕູ້ບອກວ່າ ຮອຍຍິ້ມຂອງແມ່ຕູ້ມີໜ້ອຍ ຕ້ອງທ້ອນໄວ້ອັດກະປ໋ອງສົ່ງອອກຂາຍຕ່າງປະເທດ.

ກະທິຕັກເຂົ້າໃສ່ໂອ ສີຂາວນວນຂອງເຂົ້າຫຸງເຂົ້າກັນດີກັບອາກາດສົດຊື່ນຍາມເຊົ້າແບບນີ້ ອາຍອຸ່ນຈາກໂອເຂົ້າໃນອ້ອມແຂນແຜ່ກະຈາຍໄປທົ່ວເອິກແລະຫົວໃຈທີ່ເຕັ້ນໄວຂຶ້ນ ເວລາກະທິແລ່ນອອກໄປທ່ານ້ຳ ພໍ່ຕູ້ນັ່ງອ່ານໜັງສືພິມລໍຖ້າຢູ່ກັບຖາດອາຫານຕາມເຄີຍ ບໍ່ດົນສຽງໄມ້ພາຍກະທົບນ້ຳກໍດັງຂຶ້ນ ພ້ອມກັບຫົວເຮືອທີ່ພົ້ນທາງໂຄ້ງມາ ສີຜ້າສະບົງຂອງຍາພໍ່ເພີ່ມຕື່ມຄວາມສົດໃສໃຫ້ບັນຍາກາດ ອ້າຍທອງລູກສິດວັດ ຍິ້ມຍິ່ງແຂ້ວຂາວມາແຕ່ໄກ ພໍ່ຕູ້ວ່າອ້າຍທອງສົມໄປຢູ່ຄະນະຕະຫລົກ (ຊວນຍິ້ມ) ຍິ້ມຂອງອ້າຍທອງເປັນພະຍາດຕິດແປດ ຍິ້ມທີ່ສົ່ງມາຈາກຫົວໃຈອັນສົດໃສ ເປັນສາຍຕໍ່ກັນກັບປາກ ແລະແວວຕາແຜ່ລັດສະໝີອອກເປັນຄື້ນອອກໄປອ້ອມໆຄືກັນກັບເວລາດຶກໝາກຂີ້ຫີນລົງນ້ຳ ຈົນຄົນອ້ອມຂ້າງອ້ອມແອວ ຮູ້ສຶກໄດ້ນຳ.

ພໍ່ຕູ້ຢາດນໍ້າຢູ່ກ້ອງຕົ້ນໂພໃຫຍ່ ກະທິກໍອະນຸໂມທະນາບຸນ ພ້ອມກັບພໍ່ຕູ້ ແລະອະທິຖານໃນໃຈ.

ສ່ວນເຂົ້າເຊົ້າແມ່ຕູ້ຫາມາຖ້າຮຽບຮ້ອຍແລ້ວ ຄາບໃຫຍ່ແບບນີ້ທຸກເຊົ້າ ພໍ່ຕູ້ຈອງຜັກຕົ້ມກັບແຈ່ວເປັນຫລັກ ຂົ້ວຜັກກັບຈີ່ນປາ ເປັນຂອງກະທິເກືອບຜູ້ດຽວ ພໍ່ຕູ້ພະຍາຍາມຄະລໍາຂອງຈີ່ນທຸກຊະນິດ ພໍ່ຕູ້ມັກເວົ້າຂວັນແມ່ຕູ້ເລີຍໆວ່າ ຫຍັງກິນຂອງແມ່ຕູ້ປານຫານໍ້າມັນເຄືອບ ມື້ໃດມື້ໜຶ່ງ ພໍ່ຕູ້ສິເອົາໝໍ້ກະທະກັບຕະຫລິວໄປບໍລິຈາກໃຫ້ກອງທັບ ເພື່ອຫລອມເຮັດປືນໃຫຍ່ກູ້ຊາດ ຄັນແມ່ຕູ້ໄດ້ຍິນກໍຟຶດຟັດ ແລະມື້ນັ້ນສຽງຂອງຕະຫລິວເຄາະໝໍ້ກະທະກໍຈະດັງສະນັ່ນ ສະເທືອນ ແລະຖີ່ ຈົນເປັນຕາເຫລືອເຊື່ອ ວ່າໝໍ້ກະທະຍັງໃຊ້ວຽກໄດ້ຢູ່ໃນມື້ຕໍ່ມາ.

໔

ປິ່ນໂຕ



*"ກະທິຖ້າແມ່ທຸກມື້"*

ປິ່ນໂຕເປັນຂອງຮັກຂອງຫວງຂອງກະທິ ຂະໜາດນ້ອຍພໍດີ ບໍ່ໜັກປານໃດ ແມ່ຕູ້ຮູ້ຂະໜາດກະເພາະຂອງກະທິດີ ລາວບໍ່ຢາກເຫັນຂອງກິນເຫລືອບູດກັບມາ ຈຶ່ງແຕ່ງເຂົ້າໃຫ້ພໍດີກິນອີ່ມ ພໍ່ຕູ້ເລີຍເອີ້ນວ່າ ປິ່ນໂຕມືຖື ເພາະຖືສະດວກດີ ສ່ວນລາຍການອາຫານກໍບໍ່ພົ້ນຂົ້ວໄຂ່ກັບຂົ້ວໄກ່ໃສ່ໃບກະເພົາລົດຊາດເດັດ ຕົ້ມເຄັມໄຂ່ສີນ້ຳຕານເຂັ້ມຊຶມເຂົ້າເນື້ອໄຂ່ເພາະເຮັດໄວ້ຂ້າມຄືນ ໄຂ່ລູກເຂີຍນ້ຳອຸ້ນໜຽວ ໄຂ່ໜຶ້ງເນື້ອນວນ ໄຂ່ນົກກະທາໂອບແປ້ງຈືນ ພໍ່ຕູ້ຕັ້ງຊື່ໃຫ້ກະທິວ່າ " ໂຕກິນໄຂ່ " ຖ້າກະທິຮູ້ວ່າລາຍການອາຫານຂອງແມ່ຕູ້ມີໄຂ່ ກະທິຈະກິນໝົດທຸກຄັ້ງ ໂດຍບໍ່ຕ້ອງເອີ້ນ.

ລົດສອງແຖວແລ່ນກາຍປາກຮ່ອມທາງເຂົ້າເມືອເຮືອນ ພໍ່ຕູ້ຂັບລົດຈັກໄປສົ່ງກະທິຢູ່ປາກຮ່ອມເພື່ອຖ້າຂຶ້ນລົດ ກະທິມັກກອດແອວພໍ່ຕູ້ແໜ້ນ ນາງມັກກິ່ນຫອມຂອງນ້ຳຫອມກາເຮືອໃບ ທີ່ພໍ່ຕູ້ໃສ່ ມັກລົມພັດຄ່ອຍໆທີ່ພັດມາໄລ່ໃຫ້ເຫື່ອແຫ້ງເຫີຍໄປ ເດັກນ້ອຍອັດແຫຍ້ກັນເຕັມຄັນລົດສອງແຖວ ເພາະໂຮງຮຽນຢູ່ໃກ້ໆໜີ້ ພໍ່ຕູ້ຮ້ອງໃສ່ຜູ້ໂດຍສານອື່ນໆຫຍັບເອົາກະທິ ແລະຮ້ອງບອກລຸງຫລໍ່ຄົນຂັບລົດ ໃຫ້ອອກລົດຊ້າໆ ຢ່າຂັບກະລວດກະລາດຟ້າວຟັ່ງປານໄປກອງຖ່າຍຮູບເງົາ ຢ່າຊູເຮັດເດັກນ້ອຍເຮ່ຽຊະຊາຍຢູ່ກາງຖະໜົນເດີ້ລະ ລຸງຫລໍ່ມີແຕ່ຫົວໃສ່ແທນຄຳຕອບ.

ເດັກນ້ອຍພາກັນເອົາປິ່ນໂຕໄປວາງລຽງກັນໄວ້ຢູ່ໂຮງອາຫານກ່ອນເອົາກະຕາບໄປມ້ຽນໄວ້ໃນຫ້ອງຮຽນ ປິ່ນໂຕຫລາຍຂະໜາດ ໃຫຍ່ນ້ອຍສູງຕ່ຳຫລາກສີ ພວກມັນຄືສິລົມກັນວ່າ ມື້ນີ້ມີຫຍັງຢູ່ໃນໂຕຂອງພວກມັນ ລົດຊາດ

ແຊບຊ້ອຍເຜັດມັນຊ່ຳໃດ ຜູ່ແຕ່ງອາຫານແມ່ນໃຜ ຕັກເຂົ້າໃສ່ມາດ້ວຍຮັກ ຫລືດ້ວຍໜ້າທີ່ ມີແຕ່ຂອງກິນເງື່ອນທີ່ເຫລືອເຢັນແຕ່ຄືນກ່ອນ ພໍໄດ້ກິນອີ່ມທ້ອງ ຫລື ມີຂອງກິນແຊບໆເຮັດສຸດສີມື ເພາະເປັນເຈົ້າຂອງສູດອາຫານລົດຊາດເດັດຈົນຕັກຂາຍບໍ່ທັນໃນຕະຫລາດ ປິ່ນໂຕບາງໜ່ວຍມີຮອຍເປື້ອນທີ່ລ້າງບໍ່ອອກແຕ່ຄາບກ່ອນ ມີມົດມາໄຕ່ຫລືບໍ່ຊັ້ນກໍມີຮອຍແຫ້ນ ຮອຍກັດເພາະຕົກຫອດຜ່ານມາຫລາຍມືແລ້ວ ສຸດທ້າຍຄົງບໍ່ມີ້ມຊຶ່ມກັນໃຫ້ຖ້າເບິ່ງປິ່ນໂຕອັນສະງ່າງາມໂຕໜຶ່ງ ທີ່ຕ້ອງມາ " ອວດສະແດງ " ຕາມເຄີຍ.

" ສະງ່າ " ແມ່ນຜູ່ຖືປິ່ນໂຕທີ່ນຸ່ງຊຸດປານເປັນຄົນໃຊ້ປະຈຳເຮືອນເຈົ້ານາຍຜູ້ໃຫຍ່ " ສະງ່າ " ແມ່ນລົດໃຫຍ່ທີ່ເປີດແອເຢັນຂີ່ມາຈອດຢູ່ໜ້າໂຮງຮຽນ ແລະ " ສະງ່າ " ຄັກໆແມ່ນລິງລາຍເທິງປິ່ນໂຕ ທີ່ເປີດອອກມາກໍມີເຂົ້າຫຸງຮ້ອນໆ ແກງຈືດອາຍອອກຮວ່ານໆ ແລະອາຫານນາໆຊາດທີ່ປິ່ນໂຕອື່ນໆບໍ່ອາດຮູ້ໄດ້ ເພາະບໍ່ເຄີຍມີໂອກາດໂອ້ລົມກັບປິ່ນໂຕອັນສະງ່ານັ້ນຈັກເທື່ອ ປິ່ນໂຕສະງ່າມາຮອດໂຮງອາຫານ ກ່ອນເລີກພັກທ່ຽງບຶດດຽວແລະຈາກໄປເກືອບພ້ອມໆກັບຕອນເຂົ້າຮຽນພາກບ່າຍ.

ສຽງໝາກກະແລ່ງເລີກຮຽນພາກທ່ຽງດັງກັງວານ ກະທິຟ້າວແລ່ນຊ່ວງກັບໝູ່ລົງຂັ້ນໄດ ສວນກັນກັບອ້າຍທອງຢູ່ຕໍ່ໜ້າຫ້ອງພັກຄູ ອ້າຍທອງຍິ້ມໃຫ້ ກ່ອນຈະແຍກຄືນເມືອວັດ ອ້າຍທອງບອກວ່າທຸກມື້ ຍາມກິນເຂົ້າທ່ຽງມີອາຫານແບບບຸບເຟ (ເລືອກກິນຕາມໃຈ) ລໍຖ້າຢູ່ວັດ.

ຕອນແລງເມືອຮອດເຮືອນ ກະທິລ້າງປິ່ນໂຕ ແລະວາງຂວ້ຳໄວ້ຢູ່ຊານໃນເຮືອນຄົວ ຄ່ຳໆແລ້ວຈຶ່ງມາເຊັດໃຫ້ສະອາດອີກ ແລ້ວເອົາໄປວາງໄວ້ຂ້າງເຕົາໃຫ້ໃກ້ມືແມ່ຕູ້ໃນຕອນເຊົ້າ ຕອນກາງຄືນ ປິ່ນໂຕຄືສິຖາມເຕົາໄຟເພື່ອແກ້ເຫງົາວ່າ ມື້ນີ້ແມ່ຕູ້ເຮັດຫຍັງແດ່ນອກຈາກໂມໂຫໃຫ້ພໍ່ຕູ້.



ມ

ຊາມກັບໄມ້ໜີບເຄື່ອງ

*"ບໍ່ມີຮູບຖ່າຍຂອງແມ່ຢູ່ໃນເຮືອນເລີຍ"*

ຊາມບີ່ງບອກໃຫ້ຮູ້ວ່າແມ່ຕູ້ຢູ່ແຈໃດຂອງເຮືອນ ກະທິມີໜ້າທີ່ເກັບເຄື່ອງທີ່ຕາກຢູ່ຮາວໃສ່ຊາມໃຫ້ແມ່ຕູ້ ເຮັດໜ້າທີ່ນີ້ຕັ້ງແຕ່ມືຍັງບໍ່ເຖິງໄມ້ໜີບເທິງຮາວຜ້າ ພໍ່ຕູ້ເລີຍປະດິດຂັ້ນໄດໃສ່ລໍ້ເລື່ອນກັບບ່ອນຫ້ອຍຊາມໃສ່ເຄື່ອງນຸ່ງ ພໍ່ຕູ້ເປັນຜູ້ຍູ້ຂັ້ນໄດຊ້າໆ ໄປລະຫວ່າງຮາວຕາກເຄື່ອງ ລົມພັດຄ່ອຍໆເຄື່ອງນຸ່ງປິວສະບັດຕາມແຮງລົມ ພຶງຈິນໂພງລົມຢູ່ກັບທີ່ເພາະຖືກໄມ້ໜີບຫລາກສີໜີບໄວ້ ຄືນົກພີປີກ ແຕ່ບໍ່ອາດບິນອອກໄປໄດ້ດັ່ງໃຈປາຖະໜາ.

ແທ້ແລ້ວໄມ້ໜີບຕອນຊື້ມາໃໝ່ໆ ກໍເປັນໄມ້ໜີບເຄື່ອງທຳມະດາ ທີ່ເຮັດຈາກໄມ້ ກະທິເອງເອົາມາທາສີທຽນແດ່ ສໍສີໄມ້ແດ່ ສີນ້ຳນຳ ຕາມຄວາມສາມາດໃນແຕ່ລະໄວ ພໍ່ຕູ້ອື້ຄຸຍວ່າສະໄໝເປັນບ່າວເຄີຍສອນສິລະປະໃຫ້ເດັກນ້ອຍ ສີໜ້າປະຫລາດໃຈຂອງແມ່ຕູ້ແຮ່ງເຮັດໃຫ້ພໍ່ຕູ້ຄຸຍຕື່ມລະອຽດກ່ຽວກັບແມ່ສີ ສີຮ້ອນ ສີເຢັນ ຄູ່ສີ ລົງທ້າຍດ້ວຍການຢິບເອົາອັນໃກ້ມືມາສະແດງໃຫ້ເບິ່ງ ບັງເອີນມື້ນັ້ນແມ່ນໄມ້ໜີບເຄື່ອງ.

ຂັ້ນໄດໃສ່ລໍ້ຍັງບອກໃຫ້ຮູ້ເຖິງຄວາມສູງຂອງກະທິ ດຽວນີ້ກະທິຂຶ້ນຂັ້ນດຽວກໍຢື້ເຖິງ ແຕ່ກະທິມັກຢູ່ສູງເໜືອຮາວຕາກເຄື່ອງ ເພງຟ້ອນຂອງເຄື່ອງນຸ່ງທີ່ປິວໄປຕາມລົມບໍ່ເຄີຍຊ້ຳລີລາຈັງຫວະ ກະທິມັກວາງທ່າຄືຜູ້ກຳກັບການບັນເລງໃນວົງດົນຕີ ແບບດຽວກັບທີ່ນາງເຫັນໃນກາຕູນ ບາງເທື່ອກວ່າຈະກູ້ເຄື່ອງໝົດຮາວ ຕາເວັນກໍເກືອບຕົກດິນແລ້ວ.

ໃນຫ້ອງອະເນກປະສົງຂອງແມ່ຕູ້ ທີ່ພໍ່ຕູ້ເອີ້ນວ່າຫ້ອງການຂອງແມ່ຕູ້ມີຊາມວາງລຽງກັນເປັນແຖວ ກະທິຕ້ອງແຍກເຄື່ອງລົງໃສ່ຊາມໃຫ້ຖືກ

ເຄື່ອງນຸ່ງຂອງພໍ່ຕູ້ ຂອງແມ່ຕູ້ ແລະເຄື່ອງຂອງກະທິເອງ ແຍກກັນຄົນລະຊາມ ຜ້າປູບ່ອນປອກໝອນໃສ່ອີກຊາມໜຶ່ງ ຜ້າເຊັດຖ້ວຍຈານ ຜ້າເຊັດປາກ ຜ້າເຊັດເຮືອນທົ່ວໄປ ຫລື "ຜ້າຂີ້ຮ້າຍ" ຕາມທີ່ພໍ່ຕູ້ມັກເອີ້ນ ກໍຕ້ອງແຍກໄວ້ຊາມໜຶ່ງຕ່າງຫາກ ນອກຈາກເຫດຜົນເລື່ອງຄວາມສະອາດ (ເຊິ່ງພໍ່ຕູ້ຄິດວ່າມັນກາຍພໍດີ) ກໍເພື່ອຄວາມສະດວກສະບາຍເວລາກຳກັບບຳເອື້ອຍສະໃບຜູ້ຣີດຜ້າໃຫ້ ແມ່ຕູ້ຈະເຂົ້າມາກວດເບິ່ງແລະຫຍັບຊາມເຂົ້າໄປຣີດຕາມລຳໜຶ່ງ ສອງ ສາມ ສັບກັນຕາມຄວາມຕ້ອງການຊາມໃສ່ຊຸດນັກຮຽນຂອງກະທິຢູ່ກົກແຖວສະເໝີ ເພາະຕ້ອງໃສ່ໝູນວຽນກັນ.

ສຽງຝົນຕົກລົງໃສ່ຫລັງຄາເຮືອນດັງມ່ວນຂຶ້ນຕື່ມ ເມື່ອມີສຽງປະສານດັງເປາະແປະມາຈາກຊາມທີ່ລາງຄົນລືມປະໄວ້ນອກຫລັງຄາ ກະທິນອນຟັງຈົນລືມຄາວ ແຕ່ກໍຕື່ນສະດຸ້ງທຸກຄັ້ງເມື່ອໄດ້ຍິນສຽງຟາດ ຂອງຟ້າຜ່າຟ້າຮ້ອງດັງຄືສຽງຂອງຄົນແຜດຮ້ອງປານຫົວໃຈສະຫລາຍທຸກຄັ້ງ ບໍ່ຮູ້ວ່າກະທິຫູແວ ຫລື ສຽງນັ້ນມັນຝັງຢູ່ໃນຄວາມຊົງຈຳຂອງນາງ ບາທີນັ້ນແມ່ຕູ້ຈະເຂົ້າມາຫາກະທິຢູ່ຫ້ອງນອນ ແລ້ວກອດກະທິໄວ້ຈົນຫລັບໄປບຳກັບທັງແມ່ຕູ້ທັງຫລານຈົນຊອດແຈ້ງ ກະທິໝົ້ນເຂົ້າຫາອ້ອມກອດຂອງແມ່ຕູ້ ເພື່ອບໍ່ຢາກໄດ້ຍິນສຽງຟ້າສຽງຝົນ ສຽງຄົນ ສຽງແມ່ຍິງຄົນນັ້ນ ຜິວນວນເຢັນຂອງແມ່ຕູ້ຫອມກິ່ນອ່ອນໆ ແມ່ຕູ້ບໍ່ເລົ່ານິທານເພື່ອອອຍ ຫລືຮ້ອງເພງກ່ອມແຕ່ແມ່ຕູ້ລູບຫລັງຄ່ອຍໆ ສະໝ່ຳສະເໝີຊວນໃຫ້ເຄີ້ມຫລັບ ຄັ້ງໜຶ່ງກະທິລັກຍີ່ຕາເບິ່ງໜ້າແມ່ຕູ້ ເຫັນໜ່ວຍຕາວາວໆ ຟ້າແລບໄກໆ ພໍມີແສງສະຫວ່າງໃຫ້ກະທິແນ່ໃຈວ່າແມ່ຕູ້ລັກໄຫ້ຢູ່ໃນຄວາມມືດ.



# ໔

# ເຮືອພາຍນ້ອຍ



*"ບໍ່ເຄີຍມີໃຜເວົ້າເຖິງແມ່"*

ພໍ່ຕູ້ຫາຊື້ເຮືອພາຍນ້ອຍ ໄທບ້ານແຖວນັ້ນເອີ້ນວ່າເຮືອ " ອີ່ໂມ " ມາໄວ້ພາຍເລາະທ່ຽວຕາມຮ່ອງນ້ຳ ພໍ່ຕູ້ບອກວ່າເອົາໄວ້ໜີຈາກສຽງຈົ່ມສຽງວ່າຂອງແມ່ຕູ້ ກະທິກັບພໍ່ຕູ້ມັກໄປກັນສອງຄົນ ອອກເດີນທາງກັນ ຕອນສວາຍໆ ພໍ່ຕູ້ພາຍເຮືອຊ້າໆຜ່ານຮ່ອງນ້ຳ ທັງສອງຝັ່ງມີຕົ້ນໄມ້ກິນໝາກ ເຊັ່ນ ໝາກມ່ວງ ໝາກກຽງ ຕົ້ນໄຄ້ທີ່ມັກເກີດຕາມແຄມນ້ຳ ພໍ່ຕູ້ບໍ່ຈອດເຊົາພັກແຕ່ຮ້ອງຖາມຂ່າວສະບາຍດີທຸກຄົນທີ່ກາຍມາ ລຸງສິນກຳລັງຫວ່ານແຫຢູ່ທ່ານ້ຳໜ້າບ້ານ ເບິ່ງຊິ່ງຄືສິໄດ້ປາປາກຫລາຍໂຕ ພໍ່ຕູ້ຮ້ອງບອກວ່າຂາກັບສິຂໍປັນໄປໃຫ້ແມ່ຕູ້ ເຮັດເອືອບນ້ຳປາແລ້ວຈືນໃຫ້ຂອບໆເປັນຄາບແລງໃຫ້ກະທິ.

ເຮືອພົ້ນອອກຈາກຮ່ອງອັນຮົ່ມຄຶ້ມມາສູ່ວັງນ້ຳອັນກວ້າງໃຫຍ່ສຸດສາຍຕາ ນ້ຳພຽງຝັ່ງຖືກລົມຄ່ອຍໆພັດເປັນວົງນ້ອຍໆກະຈາຍອອກ ທົ່ງນາຂຽວສົດເຫັນມາແຕ່ໄກໆ ພໍ່ຕູ້ປ່ອຍໃຫ້ເຮືອລອຍໄປຕາມທົ່ງ ແລ້ວລົງມືດຶງສາຍບົວ ຕ້ອງຄັກໆວ່າແມ່ນບົວຂີ້ແບ້ ບໍ່ແມ່ນບົວຫອງ ທີ່ມີລົດຊາບເຝື່ອນຂົມ ບົວຂີ້ແບ້ ໃບມັນມົນໆບໍ່ມີແສກ ດອກມີສີບົວ ສາຍບົວສົດຂອບຈ້ຳນ້ຳແຈ່ວທີ່ແມ່ຕູ້ ຫໍ່ໃສ່ໃບບົວກັບເຂົ້າໃໝ່ ເປັນເຂົ້າທ່ຽງທີ່ແຊບຊ້ອຍອີກຄາບໜຶ່ງ ກະທິຍັງມ່ວນນຳການຫັກສາຍບົວເປັນຂໍ້ ຫ້ອຍຄໍຕາງສາຍຄໍ.

ລາງເທື່ອກໍຈະພໍ້ໝາກຈັບເກີດເປັນແພ ກະທິມັກກິນໝາກຈັບຫລາຍກວ່າໝາກແຫ້ວ ພໍ່ຕູ້ເກັບເອົາ ເມືອຕົ້ມກິນຢູ່ເຮືອນ ອັນທີ່ແນ່ນອນເຫັນທຸກເທື່ອແມ່ນຜັກປອດ ຫລືຜັກຕົບ ດອກສີອິດຈາງໆ ກິບບາງໆ ກໍາໄວ້ດົນໆກໍ

ແຫ່ວໜິດງາມ ດອກຜັກບົ້ງສີຂາວກໍງາມດີຄືກັນ ພໍ່ຕູ້ບອກວ່າຖ້າເປັນນັກແຕ້ມສີມືດີຄື ໂມເນດ ກໍຈະຖ່າຍທອດລົງຜືນຜ້າຢ່າງງາມປານສີຍ້ອຍ.

ພໍ່ຕູ້ພາຍເຮືອຢ່າງອາລົມດີ ບໍ່ໄດ້ຄິດກະເຖິງເວລາທີ່ອອກຈາກເຮືອນມາຈອດແວບ່ອນນັ້ນບ່ອນນີ້ ຕອນຈັກໂມງ ແລະຕ້ອງກັບຄືນເຮືອນຍາມໃດ ພໍ່ຕູ້ວ່າບໍ່ແມ່ນການນຳທ່ຽວຕາມຕາລາງຖ້ຽວລົດໄຟ ແຕ່ແມ່ນການນຳພາທ່ຽວແບບຕາມໃຈ.

ເຮືອອີ່ໂມທ້ອງແບນຫົວສັ້ນໆລຳນີ້ ເຮັດໜ້າທີ່ເປັນພາຫະນະຊັ້ນດີ ບໍ່ປ່ອຍອາຍພິດ ເຄື່ອນທີ່ຜ່າສາຍນ້ຳໃສໄປຕາມແຮງຂອງຄົນພາຍ ຖ້າຜ່ານເຂົ້າໄປກາງຝູງແມງໜ້າງ້ຳ ພວກມັນແຕກຕື່ນໜີເປັນວຸ້ນໆ ພໍ່ຕູ້ກັບຫຼານສາວມິດງຽບບໍ່ມີໃຜສົ່ງສຽງ ປ່ອຍໃຫ້ເຮືອກັບໜ້ານ້ຳພົບປະກັນຕາມສະບາຍ ຕາເວັນຢູ່ສູງເທິງຟ້າ ເລີ່ມສ່ອງແສງລົງມາ ແຕ່ນ້ຳຢູ່ອ້ອມຮອບທົ່ງເປັນຄືແຜ່ນກະຈົກກັນອາຍຮ້ອນ ເວລານາທີຄືຢຸດເໜັງ ນ້ຳກັບຟ້າລົມກັບຕາເວັນ ຄືກັນກັບຂອບຮູບທີ່ມີເຮືອລຳໜຶ່ງປາກົດຢູ່ເຄິ່ງກາງ.

ຈັ່ງໃດກໍຕາມ ເຮືອບໍ່ສາມາດລອຍໄປຢ່າງບໍ່ມີຈຸດໝາຍ ບໍ່ໄດ້ ເຖິງວ່າການເດີນທາງນັ້ນຈະມ່ວນຊື່ນ ເທົ່າໃດກໍຕາມ.

24/VII
ห้ามจำหน่าย

# ໕

# ສາລາແຄມນໍ້າ



# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນໍາ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ